California
Deaf-Blind
Services

ໜ່ວຍບໍຣິການ
ຜູ້ພິການທັງຫູແລະຕາ
ແຫ່ງຣັຖຄາລີຟໍນີ

ພາຍໃນຣັຖຄາລີຟໍນີ (800) 822-7884

# ຄຳແຈ້ງຂໍ້ມູນຕ່າງ ໆ

## ວິທີປະຕິບັດຢ່າງຊື່ງກັນແລະກັນ ກັບຜູ້ທີ່ພິການທັງຫູແລະຕາ

ຜູ້ທີ່ພິການທັງຫູແລະຕາຈຳເປັນຕ້ອງໃຊ້ການສັມຜັດແລະການດົມກິ່ນ ເພື່ອສາມາດຊາບເຖິງຄົນ, ສະຖານທີ່ ແລະສິ່ງຂອງທີ່ເປັນສ່ວນຂອງສະພາບແວດລ້ອມຂອງເຂົາ. ບຸກຄົນເຫລົ່ານັ້ນ ອາດຍັງສາມາດມອງເຫັນແລະ/ຫຣືຍິນສຽງໄດ້ບ້າງ, ແຕ່ກໍຍັງຈຳເປັນຕ້ອງເພິ່ງພາອາສັຍການສັມຜັດແລະການດົມກິ່ນເພື່ອຢືນຍັນສິ່ງທີ່ຕົນໄດ້ເຫັນຫຣືໄດ້ຍິນ. ການຢືນຍັນດັ່ງກ່າວກໍຍັງມີຄວາມສຳຄັນຍິ່ງກວ່ານີ້ອີກເມື່ອຕ້ອງພົບກັບສະຖານະການໃໝ່ຫຣືບຸກຄົນທີ່ຕົນຍັງບໍ່ຮູ້ຈັກ.

ມັນສຳຄັນຢິ່ງທີ່ຈະຕ້ອງຖາມຄອບຄົວຂອງນັກຮຽນຫຣືພະນັກງານທີ່ຄຸ້ນເຄີຍກັບບຸກຄົນທີ່ພິການທັງຫູແລະຕາວ່າ ຜູ້ນັ້ນຢາກໃຫ້ຄົນເຂົ້າໃກ້ເຂົາດ້ວຍວິທີໃດດີ. ຂໍ້ຕໍ່ໄປແມ່ນຫລັກເກນທົ່ວໄປທີ່ຈະໃຫ້ການປະຕິບັດຊື່ງກັນແລະກັນໄດ້ເປັນໄປໂດຍດີ.

1. ໃຫ້ແຕະຕ້ອງບ່າຂອງນັກຮຽນ ເພື່ອໃຫ້ສັນຍານເຕືອນວ່າຈະມີຫຍັງເກີດຂຶ້ນຣະຫວ່າງທັງສອງຄົນ.

2. ໃຫ້ແນະນຳຕົວເອງໂດຍເຄື່ອງໝາຍແທນຊື່ (ການໃຊ້ມືທຳອັກສອນນຳຂອງຊື່ຂອງທ່ານຕາມບ່ອນທີ່ເປັນເອກະລັກສະເພາະຂອງທ່ານ ເຊັ່ນ ຜົມ, ນາລິກາ, ແວ່ນຕາ, ຮ້ອຍຍິບ ເປັນຕົ້ນ), ຫຣືໂດຍໃຫ້ເຂົາດົມກິ່ນຂໍ່ແຂນເພື່ອໃຫ້ເຂົາເຄີຍຊິນກັບກິ່ນທີ່ເປັນເອກະລັກພິເສດຂອງທ່ານ ເຊັ່ນ ນ້ຳຫອມຫຣືນ້ຳໂຄລອຍ ຫຣືສິ່ງຂອງທີ່ເປັນເອກະລັກພິເສດຂອງທ່ານ (ເຊັ່ນ ພວງກະແຈ, ເຄື່ອງປະດັບ, ຫົວເຂັມຂັດ ເປັນຕົ້ນ).

3. ໃຫ້ໃຊ້ມືທີ່ອຸ່ນ ເພື່ອຫລີກລ່ຽງບໍ່ໃຫ້ເຂົາສະດຸ້ງດ້ວຍຄວາມຕົກໃຈ.

4. ໃຫ້ແຕະຕ້ອງຜູ້ນັ້ນດ້ວຍການສັມຜັດທີ່ລຶກຊຶ້ງແລະໝັ້ນຄົງຕາມບ່ອນທີ່ເປັນກະດູກ (ເຊັ່ນ ຂໍ່ສອກ, ຫົວເຂົ່າ ຫຣືບ່າ) ເພື່ອຫລີກລ່ຽງບໍ່ໃຫ້ກະຕຸ້ນຜູ້ນັ້ນຫລາຍໂພດ. ບຸກຄົນຫລາຍຄົນທີ່ເປັນພິການທັງຫູແລະຕາມີຄວາມຮູ້ສຶກໄວຕໍ່ການສັມຜັດ ແລະອາດຖືກກະຕຸ້ນເກີນສົມຄວນໄດ້ໂດຍງ່າຍ.

5. ຫາກຜູ້ທີ່ພິການທັງຫູແລະຕາບໍ່ສູ້ສາມາດຄວບຄຸມຕົວເອງໄດ້ເມື່ອເປັນອາການຊັກ, ຄວນຫລີກລ່ຽງບໍ່ໃຫ້ແຕະຕ້ອງຢ່າງເບົາແລະກະທັນຫັນ ເນື່ອງຈາກການສັມຜັດຢ່າງນີ້ຈະກະຕຸ້ນຜູ້ນັ້ນຫລາຍໂພດແລະອາດເປັນເຫດໃຫ້ເກີດເປັນອາການຊັກ. ສຳຫຣັບບຸກຄົນທີ່ເປັນອັມມະພາດເນື່ອງຈາກສມອງໄດ້ຮັບບາດເຈັບ, ການສັມຜັດເບົາ ໆ ແລະຢ່າງກະທັນຫັນອາດທຳໃຫ້ເກີດການປະຕິກິຣິຍາດ້ວຍການເໜັງຕີງທີ່ບໍ່ເໝາະສົມ. ການສັມຜັດທີ່ລຶກຊຶ້ງແລະໝັ້ນຄົງທຳໃຫ້ຣະບົບປະສາດຜ່ອນຄາຍແລະຈະທຳໃຫ້ຜູ້ນັ້ນຕອບໂຕ້ໄດ້ແທນທີ່ຈະຖືກກະຕຸ້ນເກີນຄວນ.

ຄຳແຈ້ງຂໍ້ມູນຈາກ California Deaf-Blind Services (ໜ່ວຍບໍຣິການຜູ້ພິການທັງຫູແລະຕາແຫ່ງຣັຖຄາລີຟໍນີ ຫຣື CDBS) ເຫລົ່ານີ້ ຈັດທຳເພື່ອທີ່ຈະນຳໄປໃຊ້ປະໂຍດໄດ້ ທັງໂດຍຄອບຄົວແລະໂດຍຜູ້ປະກອບອາຊີບທີ່ຮັບໃຊ້ບໍຣິການຜູ້ທີ່ພິການທັງຫູທັງຕາ. ຂໍ້ມູນດັ່ງກ່າວໃຊ້ໄດ້ກັບນັກສຶກສາຕັ້ງແຕ່ເກີດມາຈົນເຖິງໄດ້ຄົບອາຍຸ 22 ປີບໍຣິບູນ. ວັດຖຸປະສົງຂອງຄຳແຈ້ງຂໍ້ມູນແຕ່ລະສະບັບ ແມ່ນໃຫ້ຄວາມຮູ້ໂດຍທົ່ວໄປໃນເຣື່ອງໃດເຣື່ອງນຶ່ງຢ່າງເຈາະຈົງ. ນັກສຶກສາແຕ່ລະທ່ານ ສາມາດຂໍຫາບຣາຍລະອຽດເພີ່ມເຕີມໄດ້ໂດຍຜ່ານການຊ່ວຍເຫລືອທາງວິທຍາການສະເພາະຣາຍທີ່ໃຫ້ໂດຍ CDBS. ຄຳແຈ້ງຂໍ້ມູນນີ້ ຈຶ່ງນັບເປັນຈຸດເຣີ່ມຕົ້ນສຳຫຣັບການໄດ້ຮັບຊາບຣາຍລະອຽດຕໍ່ໄປ.